ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 512 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 29 ມິຖຸນາ 2018

# ຂໍ້ຕົກລົງ

# ວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 99/ກຄທ, ລົງວັນທີ 29 ພຶດສະພາ 2018,

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ໝວດທີ 1
## ຂໍ້ກຳນົດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ເພື່ອຫຼຸດຜ່ອນຄວາມສ່ຽງໃນການສູນເສຍຊັບສິນ, ແນໃສ່ຮັກສາຄວາມໝັ້ນຄົງຂອງທະນາຄານ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ເຂັ້ມແຂງ, ໝັ້ນຄົງ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ.

**ມາດຕາ 2 ອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທະນາຄານ** ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍຂອງ ສປປ ລາວ;
2. **ໜີ້** ໝາຍເຖິງ ສິນເຊື່ອ ຊຶ່ງກວມເອົາ ເງິນກູ້ ແລະ ພາລະຜູກພັນທາງການເງິນ ຕາມຄວາມໝາຍທີ່ໄດ້ກຳນົດໄວ້ໃນຂໍ້ທີ 3 ແລະ 4 ຂອງມາດຕານີ້;



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

3. **ເງິນກູ້** ໝາຍເຖິງ ເງິນທີ່ທະນາຄານໃຫ້ລູກຄ້າກູ້ຢືມໃນຮູບແບບດັ່ງນີ້: ເງິນກູ້ທົ່ວໄປ (Loan), ເງິນເບີກເກີນບັນຊີ (Over Draft), ເງິນຈ່າຍລ່ວງໜ້າ (Advance) ແລະ ເງິນກູ້ປະເພດອື່ນໆ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ;
4. **ພາລະຜູກພັນທາງການເງິນ** ໝາຍເຖິງ ຂໍ້ຜູກພັນໃນສັນຍາທີ່ທະນາຄານ ໄດ້ຕົກລົງກັບລູກຄ້າໃນຮູບແບບດັ່ງນີ້: ວົງເງິນສິນເຊື່ອ (Credit Lines), ໜັງສືສິນເຊື່ອ (Letter of Credit), ໜັງສືຄ້ຳປະກັນ (Bank Guarantee), ໜັງສືຮັບຮອງການຈ່າຍເງິນ (Aval/Acceptance) ແລະ ອື່ນໆຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ;
5. **ໜີ້ຕ້ອງຮັບທວງຍາກ** ໝາຍເຖິງ ສິນເຊື່ອທີ່ຖືກຈັດເປັນຊັ້ນຕ່ຳກວ່າມາດຕະຖານ, ຊັ້ນສົງໄສ ແລະ ຊັ້ນສູນ;
6. **ການປັບປຸງໂຄງສ້າງເງິນກູ້** ໝາຍເຖິງ ການດັດແກ້ເນື້ອໃນສັນຍາເງິນກູ້ ອັນເນື່ອງຈາກລູກໜີ້ ບໍ່ສາມາດຊຳລະໜີ້ຕາມເງື່ອນໄຂຂອງສັນຍາດັ່ງກ່າວ;
7. **ການຄ້ຳປະກັນຢ່າງໝັ້ນຄົງ** ໝາຍເຖິງ ການຄ້ຳປະກັນຢ່າງເຕັມສ່ວນ ທັງຕົ້ນທຶນ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍໃນການຮຽກເກັບໜີ້ ດ້ວຍຫຼັກຊັບຄ້ຳປະກັນ ຫຼື ດ້ວຍການຄ້ຳປະກັນຈາກບຸກຄົນທີສາມ ທີ່ມີຖານະການເງິນໝັ້ນຄົງ ແລະ ມີຄວາມສາມາດດ້ານການເງິນພຽງພໍ ເພື່ອຊຳລະໜີ້ທັນຕາມກຳນົດສັນຍາ.

## ໝວດທີ 2
## ການບໍລິຫານສິນເຊື່ອ

### ມາດຕາ 3 ການບໍລິຫານສິນເຊື່ອ

ທະນາຄານ ຕ້ອງເປັນເຈົ້າການໃນການບໍລິຫານສິນເຊື່ອ ໃຫ້ສອດຄ່ອງກັບຍຸດທະສາດ ແລະ ຄວາມສາມາດໃນການຮັບຄວາມສ່ຽງຂອງຕົນ, ສະພາບຕະຫຼາດ ແລະ ເສດຖະກິດມະຫາພາກ, ໃນນັ້ນຂະບວນການບໍລິຫານ ຕ້ອງມີຄວາມຮັດກຸມ ພາຍໃຕ້ການຊີ້ນຳຂອງສະພາບໍລິຫານ ແລະ ຄະນະອຳນວຍການ ເພື່ອສາມາດກຳນົດ, ວັດແທກ, ປະເມີນ, ຕິດຕາມ, ລາຍງານ ແລະ ຄວບຄຸມ ແນໃສ່ຫຼຸດຜ່ອນຄວາມສ່ຽງສິນເຊື່ອຢ່າງທັນການ.

### ມາດຕາ 4 ຫຼັກການສ້າງຄູ່ມືບໍລິຫານສິນເຊື່ອ

ທະນາຄານ ຕ້ອງສ້າງຄູ່ມືບໍລິຫານສິນເຊື່ອ ຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ຕ້ອງສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ;
2. ຕ້ອງສອດຄ່ອງກັບກົດລະບຽບພາຍໃນຂອງທະນາຄານ ທີ່ໄດ້ຮັບການຮັບຮອງຈາກທະນາຄານແຫ່ງ ສປປ ລາວ;
3. ຕ້ອງສອດຄ່ອງກັບຍຸດທະສາດ ແລະ ຄວາມສາມາດໃນການຮັບຄວາມສ່ຽງຂອງຕົນ, ສະພາບຕະຫຼາດ ແລະ ເສດຖະກິດມະຫາພາກ;
4. ຕ້ອງກຳນົດຂັ້ນຕອນ ແລະ ວິທີການບໍລິຫານສິນເຊື່ອຢ່າງຊັດເຈນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ;